ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 20 ຫາ 24 ພຶດສະພາ 2024




ກອງປະຊຸມລິເລີ່ມໂຄງການ ສົ່ງເສີມກະສິກຳທັນສະໄໝ ເພື່ອປັບຕົວ ແລະ ຫຼຸດຜ່ອນການປ່ຽນແປງ ດິນຟ້າອາກາດ ໃຫ້ແກ່ກຸ່ມຊາວກະສິກອນແມ່ຍິງ ແລະ ໄວໜຸ່ມ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ກອງປະຊຸມລິເລີ່ມໂຄງການ ສົ່ງເສີມກະສິກຳທັນສະໄໝ ເພື່ອປັບຕົວ ແລະ ຫຼຸດຜ່ອນການປ່ຽນແປງດິນຟ້າອາກາດ ໃຫ້ແກ່ກຸ່ມຊາວກະສິກອນແມ່ຍິງ ແລະ ໄວໜຸ່ມ ຢູ່ ສປປ ລາວ

ສປປ ລາວ ເປັນປະເທດໜຶ່ງທີ່ມີຄວາມອ່ອນໄຫວ ຕໍ່ຜົນຂອງການປ່ຽນແປງດິນຟ້າອາກາດ ເປັນຕົ້ນແມ່ນ: ໄພ ແຫ້ງແລ້ງ, ຝົນຕົກບໍ່ຖືກຕ້ອງຕາມລະດູການ ແລະ ການລະບາດຂອງສັດຕູພືດ ທີ່ເກີດຈາກການປ່ຽນແປງຂອງສະພາບອາກາດ. ອົງການອ໋ອກຟາມ ແລະ ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ຈຶ່ງໄດ້ວາງແຜນຮ່ວມກັນເພື່ອຫາວິທີທາງແກ້ໄຂໃຫ້ເໝາະສົມ ແລະ ຍືນຍົງ, ຈຶ່ງໄດ້ສຶກສາບັນຫາແນວພັນພືດທີ່ມີຄວາມທົນທານ ແລະ ປັບຕົວຕໍ່ສະພາບການປ່ຽນແປງດັ່ງກ່າວ, ຊອກຫາເຕັກນິກທີ່ເໝາະສົມກັບສະພາບພູມສັນຖານຂອງບ້ານເຮົາ ແລະ ວິທີການຜະລິດທີ່ຊາວນາສາມາດເຮັດໄດ້.

ຈາກບົດຮຽນທີ່ຖອດຖອນໄດ້ໃນໄລຍະຜ່ານມາ ແລະ ຮຽນຮູ້ຈາກຫຼາຍປະເທດ ຈຶ່ງໄດ້ວາງແຜນໂຄງການສົ່ງ ເສີມກະສິກຳທັນສະໄໝ ເພື່ອໃຫ້ສາມາດປັບຕົວ ແລະ ຫຼຸດຜ່ອນການປ່ຽນແປງດິນຟ້າອາກາດ ລວມທັງເພີ່ມສະມັດຕະພາບຜົນຜະລິດໃຫ້ສູງ ເພື່ອສາມາດປະກອບສ່ວນໃນການຫຼຸດຜ່ອນ ບັນຫາຂາດແຄນສະບຽງອາຫານໃຫ້ແກ່ຊາວກະສິ ກອນຢູ່ສອງແຂວງ ທີ່ມີຄວາມຕ້ອງການແຕກຕ່າງກັນຄື: ແຂວງ ຫຼວງພະບາງ ຈະເນັ້ນໃສ່ການກະສິກຳເນີນສູງ ທີ່ທົນທານຕໍ່ສະພາບແຫ້ງແລ້ງ ແລະ ແຂວງສະຫວັນນະເຂດ ທີ່ເນັ້ນໃສ່ການກະສິກຳທີ່ທົນນ້ຳຖ້ວມ.

ໂຄງການນີ້ ມີມູນຄ່າ 1.850.000 ຢູໂຣ ໂດຍແມ່ນ ສະຫະພາບເອີລົບ ເປັນຜູ້ໃຫ້ທຶນ 1.500.000 ຢູໂຣ ແລະ ອົງການ ອ໋ອກຟາມ ປະກອບສ່ວນຕື່ມອີກ 350.000 ຢູໂຣ ແລະ ຈະໄດ້ດຳເນີນໄປ ເລີ່ມແຕ່ ຕົ້ນປີ 2024 ຫາ ຕົ້ນປີ 2028. ຈຸດປະສົງຂອງໂຄງການ ເພື່ອສ້າງຄວາມອາດສາມາດໃຫ້ແກ່ກຸ່ມແມ່ຍິງ ແລະ ຊາວໜຸ່ມ, ວິຊາການຂັ້ນທ້ອງຖິ່ນ ແລະ



ກຸ່ມຊຸມຊົນທີ່ມີຄວາມສ່ຽງ ເພື່ອສົ່ງເສີມການເຮັດກະສິກໍາທັນສະໄໝ ໃນການປັບຕົວ ແລະ ຫຼຸດຜ່ອນການປ່ຽນ ແປງດິນຟ້າອາກາດ ໂດຍຜ່ານການຮຽນຮູ້, ວາງແຜນ ແລະ ການສາທິດຫຼາກຫຼາຍຮູບແບບກະສິກໍາທັນສະໄໝ ທີ່ມີຄວາມເໝາະສົມ ຊຶ່ງແມ່ນສະຖາບັນ ຈະເປັນຜູ້ຊີ້ນໍາດ້ານເຕັກນິກ, ສະມາຄົມພັດທະນາ ຮ່ວມກັບຂະແໜງການຂັ້ນທ້ອງຖິ່ນເປັນຜູ້ນໍາພາຊາວກະສິກອນເຮັດຕົວຈິງ.

ໂຄງການ ຈະໄດ້ຈັດຕັ້ງປະຕິບັດ ໂດຍອົງການອັອກຟາມ, ສະຖາບັນຄົ້ນຄ້ວາກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ ແລະ ບັນດາສະມາຄົມພັດທະນາ ແລະ ກຸ່ມສະຫະກອນທີ່ຢູ່ຂັ້ນພື້ນຖານຈໍານວນໜຶ່ງ, ມີໄລຍະເວລາໃນການຈັດຕັ້ງປະຕິບັດໂຄງການ ນັບແຕ່ຕົ້ນປີ 2024 ຫາຕົ້ນປີ 2028. ຫຼັງຈາກສິ້ນສຸດໂຄງການ ຄາດວ່າຈະສາມາດສ້າງຄວາມເຂັ້ມແຂງດ້ານກະສິກໍາທັນສະໄໝ ໃຫ້ແກ່ຫຼາຍພາກສ່ວນທີ່ກ່ຽວຂ້ອງ ເປັນຕົ້ນແມ່ນ: ຂະແໜງການຂອງເມືອງ, ສະມາຄົມພັດທະນາຊາວກະສິກອນ, ມີຫຼາກຫຼາຍຮູບແບບການກະສິກໍາທັນສະໄໝ ທີ່ໄດ້ຮັບການສາທິດ ແລະ ຈັດຕັ້ງປະຕິບັດ ຢູ່ 15 ບ້ານ ໃນ 7 ເມືອງ ຂອງສອງແຂວງ, ມີຄອບຄົວຕົວແບບໃນການປູກແຕ່ງຜົນຜະລິດ ທີ່ໄດ້ຈາກກະສິກໍາທັນສະໄໝ ໃຫ້ມີມູນຄ່າເພີ່ມຂຶ້ນໃນແຕ່ລະແຂວງ.

ໃນວັນທີ 14 ພຶດສະພາ 2024 ສະຖາບັນຄົ້ນຄ້ວາກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ ຮ່ວມກັບ ອົງການ ອັອກຟາມ ປະຈໍາ ສປປ ລາວ ໄດ້ ເປີດກອງປະຊຸມ ລິເລີ່ມ ໂຄງການສົ່ງເສີມກະສິກໍາທັນສະໄໝ ເພື່ອປັບຕົວ ແລະ ຫຼຸດຜ່ອນການປ່ຽນແປງດິນຟ້າອາກາດ ໃຫ້ແກ່ກຸ່ມຊາວກະສິກອນແມ່ຍິງ ແລະ ໄວໜຸ່ມ ຢູ່ ສປປ ລາວ ຢ່າງເປັນທາງການຂຶ້ນ, ທີ່ນະຄອນຫລວງ ວຽງຈັນ. ໂດຍການເປັນປະທານຮ່ວມຂອງ ທ່ານ ນາງ ປອ. ຈັນທະຄອນ ບົວລະພັນ ຫົວໜ້າສະຖາບັນຄົ້ນຄ້ວາກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ, ທ່ານ ທັດສະພອນ ບຸດສາຫຼີງ ຜູ້ອໍານວຍການອົງການ ອັອກຟາມ ປະຈໍາ ສປປ ລາວ ທ່ານ ນາງ ອີນ້າ ມະຊີລີໂອນີເຕ້ ເອກອັກຄະລັດຖະທູດ ສະຫະພາບເອີລົບ ປະຈໍາ ສປປ ລາວ. ຊຶ່ງມີຕາງໜ້າຈາກກະຊວງທີ່ກ່ຽວຂ້ອງ, ອົງການຈັດຕັ້ງສາກົນ, ແຂວງ ແລະ ເມືອງເປົ້າໝາຍ ເຂົ້າຮ່ວມທັງ ໝົດ 33 ທ່ານ, ຍິງ 12 ທ່ານ. ໃນທີ່ປະຊຸມໄດ້ຮັບຟັງ ການລາຍງານກ່ຽວກັບ: ການສົ່ງເສີມກະສິກໍາທັນສະໄໝດ້ານດິນຟ້າອາກາດ ເພື່ອຕອບສະໜອງຕໍ່ການປັບຕົວຕໍ່ສະພາບພູມອາກາດ ແລະ ຄວາມຕ້ອງການໃນການຫຼຸດຜ່ອນຜົນກະທົບ ຂອງກຸ່ມຊາວກະສິກອນແມ່ຍິງ ແລະ ກຸ່ມຊາວກະສິກອນໄວໜຸ່ມທີ່ມີຄວາມສ່ຽງ ແລະ ນໍາສະເໜີກ່ຽວກັບ: ໂຄງການສົ່ງເສີມກະສິກໍາທັນສະໄໝ ເພື່ອປັບຕົວ ແລະ ຫຼຸດຜ່ອນການປ່ຽນແປງດິນຟ້າອາກາດ ໃຫ້ແກ່ກຸ່ມຊາວກະສິກອນແມ່ຍິງ ແລະ ໄວໜຸ່ມ ຢູ່ ສປປ ລາວ.

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອນດາລາ

ບັນນາທິການ:
ທ່ານ ກິດຊະນະ ພິມມະຈັນ
ທ່ານ ໂຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄໍາແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອໍານອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກໍາ;ແລະ ປ່າໄມ້;